**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ເລກທີ 0077/ກຄພນ

ນະຄອນຫຼວງວຽງຈັນ, ວັນທີ 22 ມັງກອນ 2025

# ແຈ້ງການ

ເຖິງ: - ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.

- ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ ລາວ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ.

ເລື່ອງ: ປັບລາຄານ້ຳມັນເຊື້ອໄຟໃນຂອບເຂດທົ່ວປະເທດ.

- ອີງຕາມ ດຳລັດວ່າດ້ວຍ ກອງທຶນນ້ຳມັນເຊື້ອໄຟສະບັບເລກທີ 83/ລບ, ລົງວັນທີ 16 ມັງກອນ 2024.
- ອີງຕາມ ທິດຊີ້ນຳຂອງຄະນະນຳ ກະຊວງ ອຸດສາຫະກຳ ແລະ ການຄ້າ ຄັ້ງວັນທີ 22 ມັງກອນ 2025.
- ອີງຕາມ ສະພາບການເໜັງຕີງຂຶ້ນ-ລົງລາຄານ້ຳມັນເຊື້ອໄຟ ໃນຕະຫຼາດໂລກ ແລະ ໃນຂົງເຂດ.

ເພື່ອເຮັດໃຫ້ການປັບລາຄານ້ຳມັນເຊື້ອໄຟ ພາຍໃນປະເທດ ຂຶ້ນ-ລົງ ຕາມການເໜັງຕີງຂອງຕະຫຼາດໂລກ ທັງນີ້ ກໍເພື່ອຮັບປະກັນການສະໜອງນ້ຳມັນເຊື້ອໄຟ ໃຫ້ເປັນປົກກະຕິ.

**ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງໄດ້ອອກແຈ້ງການ ເຖິງທ່ານຊາບ ແລະ ປະຕິບັດດັ່ງນີ້:**

1. ປັບລາຄານ້ຳມັນເຊື້ອໄຟທຸກຊະນິດ ຄື: ນ້ຳມັນແອັດຊັງພິເສດ ປັບລົງ 70 ກີບ/ລິດ ແລະ ນ້ຳມັນແອັດຊັງທຳມະດາ ປັບລົງ 160 ກີບ/ລິດ, ສ່ວນນ້ຳມັນກາຊວນ ປັບຂຶ້ນ 400 ກີບ/ລິດ.

   ລາຄາຕາມຕາຕະລາງລຸ່ມນີ້ ແມ່ນລາຄາຈຸດນະຄອນຫຼວງວຽງຈັນ: ຫົວໜ່ວຍ:ກີບ.

| ລ/ດ | ຊະນິດ | ລາຄາຂາຍຍ່ອຍ | | ເພີ່ມ/ຫຼຸດ | | ໝາຍເຫດ |
|---|---|---|---|---|---|---|
| | | ຫຼ້າສຸດ | ໃໝ່ | | | |
| | | ກີບ | ກີບ | ກີບ | % | |
| 1 | ອຊ ພິເສດ | 30,110 | 30,040 | -70 | 0.23 | |
| 2 | ອຊ ທຳມະດາ | 23,650 | 23,490 | -160 | 0.68 | |
| 3 | ກາຊວນ | 19,990 | 20,390 | 400 | 2.00 | |

(ສຳລັບລາຄາຂາຍຍ່ອຍເຂດເທດສະບານແຂວງ ແມ່ນມີເອກະສານຊ້ອນທ້າຍ).

2. ລາຄາໃໝ່ນີ້ແມ່ນໃຫ້ເລີ່ມປະຕິບັດ ວັນທີ 23 ມັງກອນ 2025, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ.

3. ການຄິດໄລ່ພັນທະ ແລະ ຄ່າທຳນຽມຕ່າງໆ ແມ່ນໃຫ້ພາກສ່ວນກ່ຽວຂ້ອງ ຄິດໄລ່ເກັບຕາມທີ່ໄດ້ກຳນົດໄວ້ ໃນໃຈ້ງປະກາດລາຄານ້ຳມັນເຊື້ອໄຟ ສະບັບເລກທີ 0076/ກຄພນ, ລົງວັນທີ 22 ມັງກອນ 2025 ຈົນກວ່າຈະມີການປ່ຽນແປງ.

4. ໃຫ້ບັນດາບໍລິສັດນ້ຳມັນເຊື້ອໄຟ ປະຕິບັດຕາມເນື້ອໃນຂ້າງເທິງນີ້ຢ່າງເຂັ້ມງວດ ແລະ ຄຸ້ມຄອງປ້ຳຂາຍຍ່ອຍຂອງຕົນ ໃຫ້ບໍລິການຢ່າງເປັນປົກກະຕິ.

5. ໃຫ້ພະແນກ ອຄ ແຂວງ, ນະຄອນຫຼວງວຽງຈັນ ຊີ້ນຳຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ ລົງຕິດຕາມ,ກວດກາການຈັດຕັ້ງປະຕິບັດລາຄາໃໝ່ນີ້ຂອງປ້ຳນ້ຳມັນເຊື້ອໄຟໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເປັນປົກກະຕິ, ຫາກພົບເຫັນ ປ້ຳໃດບໍ່ປະຕິບັດຕາມລາຄາໃໝ່ນີ້ ໃຫ້ນຳໃຊ້ມາດຕະການຕ່າງໆ ຕາມລະບຽບການໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

6. ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 0041/ກຄພນ, ລົງວັນທີ 15 ມັງກອນ 2025.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ຫົວໜ້າກົມ

ສັນຕິສຸກ ພູນສະຫວັດ

ບ່ອນສົ່ງ:

- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ).
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ໃຊ້ຕາງລາຍງານ).
- ຫ້ອງການ ກະຊວງການເງິນ (ເພື່ອຊາບ).
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ).
- ກົມພາສີ ແລະ ກົມສ່ວຍສາອາກອນ ກະຊວງການເງິນ (ເພື່ອເປັນບ່ອນອີງ).
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ).
- ຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບ (ເພື່ອຊາບ).
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ (ເພື່ອຕິດຕາມ).

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ລາຄາຂາຍຍ່ອຍໜ້າປໍ້ານໍ້າມັນເຊື້ອໄຟ ໃໝ່ ໃນເຂດເທດສະບານແຂວງ, ນະຄອນຫຼວງວຽງຈັນ ເລີ່ມປະຕິບັດ ວັນທີ 22 ມັງກອນ 2025, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ຈຸດ | ແອັດຊັງພິເສດ | ແອັດຊັງທຳມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | 30,040 | 23,490 | 20,390 |
| 2 | ແຂວງຜົ້ງສາລີ | 31,030 | 24,480 | 21,380 |
| 3 | ແຂວງຫຼວງນໍ້າທາ | 30,530 | 23,990 | 20,880 |
| 4 | ແຂວງອຸດົມໄຊ | 30,710 | 24,160 | 21,060 |
| 5 | ແຂວງບໍ່ແກ້ວ | 30,140 | 23,590 | 20,490 |
| 6 | ແຂວງຫຼວງພະບາງ | 30,550 | 24,000 | 20,900 |
| 7 | ແຂວງໄຊຍະບູລີ | 30,360 | 23,820 | 20,720 |
| 8 | ແຂວງຫົວພັນ | 30,540 | 24,000 | 20,900 |
| 9 | ແຂວງຊຽງຂວາງ | 30,230 | 23,680 | 20,580 |
| 10 | ແຂວງວຽງຈັນ | 30,040 | 23,490 | 20,390 |
| 11 | ແຂວງບໍລິຄຳໄຊ | 30,090 | 23,540 | 20,440 |
| 12 | ແຂວງຄຳມ່ວນ | 30,070 | 23,520 | 20,420 |
| 13 | ແຂວງສະຫວັນນະເຂດ | 30,070 | 23,520 | 20,420 |
| 14 | ແຂວງສາລະວັນ | 30,320 | 23,780 | 20,680 |
| 15 | ແຂວງຈຳປາສັກ | 30,100 | 23,550 | 20,450 |
| 16 | ແຂວງເຊກອງ | 30,320 | 23,780 | 20,680 |
| 17 | ແຂວງອັດຕະປື | 30,370 | 23,820 | 20,720 |
| 18 | ແຂວງໄຊສົມບູນ | 30,460 | 23,910 | 20,820 |

ນະຄອນຫຼວງວຽງຈັນ, ວັນທີ 22 ມັງກອນ 2025